ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ ຈຳປາສັກ

ເລກທີ 1094 /ຈຂ.ຈສ.
ແຂວງ ຈຳປາສັກ, ວັນທີ 19 ຕຸລາ 2016.

# ຂໍ້ຕົກລົງ

## ວ່າດ້ວຍ ການລຶບລ້າງການເກັບພັນທະ ກອງທຶນສົ່ງເສີມການທ່ອງທ່ຽວແຫ່ງຊາດ ຢູ່ດ່ານສາກົນວັງເຕົ່າ ແລະ ດ່ານສາກົນໜອງນົກຂຽນ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015.
- ອີງຕາມ ລັດຖະບັນຍັດຂອງປະທານປະເທດ ແຫ່ງ ສປປ ລາວ ສະບັບເລກທີ 03/ປປທ, ລົງວັນທີ 26 ທັນວາ 2012 ວ່າດ້ວຍການອະນຸມັດເກັບພັນທະກອງທຶນສົ່ງເສີມການທ່ອງທ່ຽວແຫ່ງຊາດ.
- ອີງຕາມ ຂໍ້ຕົກລົງຂອງເຈົ້າແຂວງງ ຈຳປາສັກ ສະບັບເລກທີ 750/ຈຂ.ຈສ, ລົງວັນທີ 02/08/2016 ວ່າດ້ວຍການອະນຸມັດໃຫ້ພະແນກ ຖວທ ແຂວງ ເກັບພັນທະກອງທຶນສົ່ງເສີມການທ່ອງທ່ຽວແຫ່ງຊາດ ຢູ່ດ່ານສາກົນວັງເຕົ່າ ແລະ ດ່ານສາກົນໜອງນົກຂຽນ.
- ອີງຕາມ ບົດບັນທຶກກອງປະຊຸມເຈົ້າແຂວງ-ຮອງເຈົ້າແຂວງ ຮ່ວມກັບພະແນກການ ແລະ ເມືອງກ່ຽວຂ້ອງ ໃນຄັ້ງວັນທີ 03 ຕຸລາ 2016.

## ເຈົ້າແຂວງງ ຈຳປາສັກ ຕົກລົງ:

<u>ມາດຕາ 1</u>: ເຫັນດີລຶບລ້າງການເກັບພັນທະ ກອງທຶນສົ່ງເສີມການທ່ອງທ່ຽວແຫ່ງຊາດ ຈາກນັກທ່ອງທ່ຽວ ທີ່ຜ່ານດ່ານສາ ກົນວັງເຕົ່າ ແລະ ດ່ານສາກົນໜອງນົກຂຽນ ແຂວງ ຈຳປາສັກ ໃນອັດຕາລາຄາດັ່ງນີ້:

1. ຜູ້ນຳໃຊ້ໜັງສືຜ່ານແດນ(Passport) ເກັບ 02 ໂດລາສະຫະລັດ/ຄົນ.
2. ຜູ້ນຳໃຊ້ປຶ້ມຜ່ານແດນ(Border pass) ເກັບ 01 ໂດລາສະຫະລັດ/ຄົນ.

<u>ມາດຕາ 2</u>: ເຫັນດີລຶບລ້າງການເກັບພັນທະ ກອງທຶນສົ່ງເສີມການທ່ອງທ່ຽວແຫ່ງຊາດ ທີ່ໄດ້ບວກເຂົ້າໃນ ລາຄາປີ້ເຂົ້າຊົມແຫຼ່ງທ່ອງທ່ຽວຄອນພະເພັງ, ແຫຼ່ງທ່ອງທ່ຽວລີພະຜີ ແລະ ແຫຼ່ງທ່ອງທ່ຽວມໍລະດົກໂລກວັດພູຈຳປາສັກ ຈຳນວນ 5.000 ກີບ/ຄົນ/ຄັ້ງ ທີ່ກຸ່ມບໍລິສັດ ຍິ່ງໄຊກໄຊ ຈັດເກັບໃນໄລຍະຜ່ານມາ.

<u>ມາດຕາ 3</u>: ມອບໃຫ້ພະແນກຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວແຂວງ ປະສານສົມທົບກັບພະແນກການ, ຂະແໜງການ ແລະ ເມືອງທີ່ກ່ຽວຂ້ອງ ຄົ້ນຄວ້າ ຈັດຕັ້ງປະຕິບັດການເກັບພັນທະດັ່ງກ່າວ ຮູບແບບໃໝ່, ໂດຍແຈ້ງໃຫ້ບັນດາບໍລິສັດ ແລະ ຜູ້ປະກອບການດ້ານການທ່ອງທ່ຽວຕ່າງໆ ໃຫ້ເຂົ້າມາເສຍ

ພັນທະ ກອງທຶນສົ່ງເສີມການທ່ອງທ່ຽວແຫ່ງຊາດ ຈຸດດຽວ ຢູ່ທີ່ຫ້ອງການພະແນກຖະແຫຼງຂ່າວ ວັດທະນະທຳ ແລະ ທ່ອງທ່ຽວແຂວງ, ໂດຍຊຳລະຜ່ານໃບຕາເລັກ.

__ມາດຕາ 4__: ຂໍ້ຕົກລົງສະບັບນີ້ ໃຊ້ລົບລ້າງຂໍ້ຕົກລົງ ສະບັບເລກທີ 750/ຈຂ.ຈສ, ລົງວັນທີ 02/08/2016 ແລະ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ເຈົ້າແຂວງໆ ຈຳປາສັກ**

ດຣ ບຸນທອງ ດີວິໄຊ

ບ່ອນສົ່ງ:

- ເຈົ້າແຂວງ, ຮອງເຈົ້າແຂວງ ທ່ານລະ 01 ສະບັບ ເພື່ອຕິດຕາມ.
- ພະແນກການ, ເມືອງ ແລະ ບໍລິສັດກ່ຽວຂ້ອງ ບ່ອນລະ 01 ສະບັບ ເພື່ອຈັດຕັ້ງປະຕິບັດ.
- ຂະແໜງຄົ້ນຄວ້າ-ສັງລວມວຽກລັດ 01 ສະບັບ ເພື່ອຕິດຕາມ.
- ໜ່ວຍງານຂາເຂົ້າ-ຂາອອກ 01 ສະບັບ ເກັບມ້ຽນເພື່ອເປັນຂໍ້ມູນ.